# ປະທານປະເທດຫວຽດນາມ ສຳເລັດການຢ້ຽມຢາມ ສປປ ລາວ



*(ປຊຊ): ສະຫາຍ ຫງວຽນມິງຈຽດ ປະທານປະເທດແຫ່ງ ສສ ຫວຽດນາມ ພ້ອມພັນລະຍາ ແລະ ຄະນະສຳເລັດການຢ້ຽມຢາມ ສປປ ລາວຢ່າງເປັນທາງການ ເຊິ່ງພິ ທີສົ່ງໄດ້ຈັດຂຶ້ນທີ່ຫໍຄຳ ໂດຍມີສະຫາຍ ຈູມມາລີ ໄຊຍະສອນ ປະທານປະເທດແຫ່ງ ສປປ ລາວພ້ອມພັນລະຍາແລະ ການນຳຂອງລາວຫຼາຍທ່ານເຂົ້າຮ່ວມນຳ. ໃນລະຫວ່າງ ການຢ້ຽມຢາມ ຢ່າງເປັນທາງການຢູ່ ສປປ ລາວ ແຕ່ວັນທີ 24-26 ສິງຫານີ້ ສະຫາຍ ຫງວຽນມິງຈຽດ ໄດ້ພົບປະກັບສະຫາຍ ຈູມມາລີ ໄຊຍະສອນ ປະທານປະເທດເຮົາ ແລະ ໄດ້ຕ້ອນຮັບການນຳຂອງລາວເຮົາຫລາຍສະຫາຍເຂົ້າຢ້ຽມຂ່ຳນັບເຊັ່ນ: ໄດ້ຕ້ອນຮັບສະຫາຍ ສີສະຫວາດ ແກ້ວບຸນພັນ ປະທານ ສູນກາງແນວລາວສ້າງຊາດ, ສະຫາຍ ທອງສິງ ທຳມະວົງ ປະທານສະພາແຫ່ງຊາດ,ຕ້ອນຮັບສະຫາຍ ບົວສອນ ບຸບຜາວັນ ນາຍົກລັດຖະມົນຕີ ແລະ ສະຫາຍອື່ນໆອີກຈຳໜຶ່ງ. ນອກນີ້ປະທານປະເທດຫວຽດນາມຍັງໄດ້ເດີນທາງໄປຢ້ຽມຢາມ ແລະ ພົບ ປະກັບການນຳແຂວງຫລວງນ້ຳທາ ແລະ ແຂວງຈຳປາສັກ ເຊິ່ງການຢ້ຽມຢາມ ສປປ ລາວ ຄັ້ງນີ້ໄດ້ນຳເອົາໄມຕີຈິດມິດຕະພາບອັນດູດດື່ມ ແລະຄວາມຮັກແພງ ອັນສະໜິດສະໜົມຂອງພັກ

- ລັດກໍ່ຄືປະຊາຊົນຫວຽດນາມອ້າຍນ້ອງມາຍັງພັກ

- ລັດ ແລະ ປະຊາຊົນລາວບັນດາເຜົ່າ ອັນໄດ້ເປັນການປະກອບສ່ວນອັນສຳຄັນ ເຂົ້າໃນການເພີ່ມທະວີສາຍພົວພັນມິດຕະພາບຄວາມສາມັກຄີພິເສດ ແລະ ການຮ່ວມມືຮອບດ້ານລະຫວ່າງສອງພັກ - ສອງລັດ ແລະ ປະຊາຊົນສອງຊາດຫວຽດນາມ - ລາວ ທີ່ມີມູນເຊື້ອດີງາມໃຫ້ຈະເລີນງອກງາມຍິ່ງໆຂຶ້ນ.